nitro
This file was edited using the trial version of Nitro Pro 7
Buy now at www.nitropdf.com to remove this message

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ

ເລກທີ 1322 /ຫລບ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 6 . 7 . 2012

# ແຈ້ງການ

ຮຽນ: - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ທີ່ນັບຖື.
- ທ່ານລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ທີ່ນັບຖື.
- ທ່ານລັດຖະມົນຕີວ່າການ ກະຊວງການເງິນ.
- ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ. ✓
- ທ່ານເຈົ້າແຂວງໆຫົວພັນ.

ເລື່ອງ : ການສະເໜີຂໍຍົກລະດັບດ່ານປະເພນີ ສົມຫວັງ, ບ້ານສົມຫວັງ, ເມືອງສົບເບົາ, ແຂວງ ຫົວພັນ ຂຶ້ນເປັນດ່ານທ້ອງຖິ່ນ ( ດ່ານລະດັບຊາດ ).

ອີງຕາມໜັງສືສະເໜີ ສະບັບເລກທີ 003869 /ຕປທ.ກກສ1, ລົງວັນທີ 20 ມິຖຸນາ 2012 ຂອງ ກະຊວງການຕ່າງປະເທດ

ອີງຕາມການຕົກລົງ ຂອງທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານ ວັດທະນະທຳ - ສັງຄົມ, ຮັກສາການແທນທ່ານນາຍົກລັດຖະມົນຕີ, ໃນວັນທີ 05 ກໍລະກົດ 2012.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ : " ເຫັນດີອະນຸມັດໃຫ້ ຍົກລະດັບດ່ານປະເພນີ ສົມຫວັງ, ບ້ານສົມຫວັງ, ເມືອງສົບເບົາ, ແຂວງຫົວພັນ ຂຶ້ນເປັນດ່ານທ້ອງຖິ່ນ ( ດ່ານລະດັບຊາດ ) ຕາມການສະເໜີຂອງກະຊວງການຕ່າງປະເທດ."

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ບ່ອນນຳສົ່ງ :

| | |
|---|---|
| - ນາຍົກ, ຮອງນາຍົກ | 05 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ |
| - ຮອງຫົວໜ້າ ຫລບ | 02 ສະບັບ |
| - ກົມເລຂາ, ຫລບ | 01 ສະບັບ |
| - ເກັບມ້ຽນ | 01 ສະບັບ |

ດຣ. ສິນລະວົງ ຄຸດໄຂທູນ